# 1. ພະຍາດນິວຄາເຊີນອາຍຸອ່ອນ

ເປັນພະຍາດລະບາດທີ່ຮ້າຍແຮງ (ຜູ້ລ້ຽງຄວນລະວັງ)

## • ຄວາມໝາຍຂອງພະຍາດນິວຄາເຊີນ

ພະຍາດນິວຄາເຊີນແມ່ນພະຍາດທີ່ຮ້າຍແຮງສໍາລັບໄກ່ ຍ້ອນພະຍາດດັ່ງກ່າວແມ່ນເກີດຈາກເຊື້ອໄວຣັດ, ຊຶ່ງນັບວ່າເປັນພະຍາດ ນໍ້າເບີນຶ່ງຂອງໄກ່ທີ່ເກີດຢູ່ໃນປະເທດລາວເຮົາ.

## • ອາການຂອງໄກ່ທີ່ເປັນພະຍາດ

ໂດຍສະເພາະແມ່ນຖ້າຫາກໄດ້ມີການຕິດເຊື້ອພະຍາດດັ່ງກ່າວກໍ່ຈະສະແດງອາການຄື: ເຫົງາ ແລະບໍ່ກິນອາຫານ, ມັກຍືນຈຸ້ມກັນເປັນໝູ່, ຫາຍໃຈຍາກເພາະມີນໍ້າລາຍອັ່ງອໍຕາມປາກ ແລະລໍາຄໍ, ໃນໄລຍະທໍາອິດອາຈົມຍັງມີລັກສະນະເປັນກ້ອນຕໍ່ມາເປັນນໍ້າສີຂາວປົນສີມິ່ນ, ຢູ່ຕາມທາງມັກມີອາຈົມຕິດ 2 ຫາ3 ມື້ ຕໍ່ມາໄກ່ກໍ່ຈະຕາຍ, ສ່ວນເປີເຊັນຂອງການຕາຍແມ່ນສູງເຖິງ 100 %.



**ຮູບ:** ອາການຂອງໄກ່ທີ່ຕິດພະຍາດ

## • ການຕິດຕໍ່ຂອງພະຍາດ

ສາມາດຕິດຕໍ່ໄດ້ຫຼາຍທາງ ສໍາຄັນທີ່ສຸດແມ່ນທາງລົມ ແລະຍັງສາມາດຕິດຕໍ່ໄດ້ໂດຍຜ່ານພາຫະນະເຊັ່ນ: ຄົນ ໂດຍການສໍາພັດ ແລະຈາກເຊື້ອປົນເປື້ອນໃນອາຫານ ແລະນໍ້າ, ໃນບາງກໍລະນີທີ່ມີການຕິດເຊື້ອຢ່າງກະທັນຫັນ, ອາດຈະບໍ່ປະກົດອາການພຽງແຕ່ຈະເຫັນວ່າໄກ່ຈໍານວນໜຶ່ງ ເລີ້ມມີອາການລະບົບຫາຍໃຈໄອ, ຊຶມເຫົງານອນໝູບ, ບໍ່ກິນອາຫານ, ອ້າປາກຫາຍໃຈ, ຈາມ, ຂອບຕາບວມ, ນໍ້າຕາໄຫຼ, ນໍ້າໝູກໄຫຼ, ມີບາງໂຕຄໍບິດ ແລະຂາລ່ອຍ.

## • ການປ້ອງກັນ ແລະ ປິ່ນປົວ

ພະຍາດນີ້ ບໍ່ສາມາດປິ່ນປົວໄດ້ ແຕ່ເອົາໃຈໃສ່ໃນການປ້ອງກັນເຊັ່ນ: ການອະນາໄມຄອກ, ໂຮຍປູນຂາວ, ແຍກໄກ່ທີ່ເປັນພະຍາດ, ປ້ອງກັນການແຜ່ລາມຈາກໄກທີ່ເປັນພະຍາດຈາກບ່ອນອື່ນເຂົ້າມາລ້ຽງ, ນອກຈາກການປ້ອງກັນ ທີ່ໄດ້ກ່າວມາໃນຂ້າງເທິງແລ້ວນັ້ນພະຍາດນິວຄາເຊີນຍັງສາມາດປ້ອງກັນໄດ້ ໂດຍການໃຊ້ຢາວັກຊີນ.

## • ວິທີໃຊ້ຢາວັກຊີນ

ສໍາລັບວັກຊີນ ນິວຄາເຊີນ ອາຍຸອ່ອນ ແກ້ວ 100 ເຂັມ ປະສົມກັບນໍ້າກັ່ນ 10 ເຊເຊ, ສັ່ນໃຫ້ລະລາຍດີກ່ອນນໍາໄປຢອດ, ໃຊ້ຢອດໄກ່ທີ່ມີອາຍຸແຕ 1 ຫາ 7 ວັນ, ໃຊ້ຢອດຕາ ແລະດັງ ໂຕລະ 2 ຫາ 3 ຢອດ.



**ຮູບ:** ສະແດງການຢອດຕາໄກ່ອາຍຸ 1 ຫາ 7 ວັນ

## • ການເກັບຮັກສາ ແລະການເຄື່ອນຍ້າຍ ວັກຊີນ

ສໍາລັບການເກັບຮັກສາ ແມ່ນຈະຕ້ອງເກັບຮັກສາໃນອຸນຫະພູມ 4 ອົງສາ, ສາມາດກຸ້ມໄດ້ 3 ເດືອນ, ຕ້ອງໃຫ້ວັກຊີນຢູ່ໃນຄວາມເຢັນຕະຫຼອດເວລາ, ສ່ວນການເກັບຮັກສາໃນອຸນຫະພູມ 30 ອົງສາ, ຈະສາມາດກຸ້ມໄດ້ 1 ປີ, ໃນເວລາເຄື່ອນຍ້າຍວັກຊີນຈະຕ້ອງຢູ່ໃນຄວາມເຢັນບໍ່ໃຫ້ຖືກແສງແດດ. ແນະນໍາໃຫ້ໃຊ້ກະຕິກນໍ້າກ້ອນ ໃນການເຄື່ອນຫຍ້າຍຈະເປັນການດີ, ຖ້າບໍ່ມີກະຕິກນໍ້າກ້ອນເຮົາກໍ່ສາມາດນໍາໃຊ້ຕົ້ນກ້ວຍເຊັ່ນ: ຕັດເອົາຕົ້ນກ້ວຍມາເຈາະເປັນຮູ ເອົານໍ້າກ້ອນໃສ່ແລ້ວນໍາຢາວັກຊີນລົງໃສ່ ເອົາກາບກ້ວຍປົກ ແລ້ວໃຊ້ເຊືອກຟາງມັດແລ້ວກໍ່ສາມາດເຄື່ອນຫຍ້າຍໄດ້.

## • ສິ່ງທີ່ຄວນຮູ້ໃນການນຳໃຊ້ຢາວັກຊິນ

1. ຄວນໃຫ້ຢາວັກຊິນແກ່ສັດທີ່ມີສຸກຂະພາບແຂງແຮງດີ, ເພື່ອຮັບປະກັນການສ້າງພູມຄຸ້ມກັນໄດ້ຢ່າງເຕັມສ່ວນ
2. ຄວນສຶກສາລາຍລະອຽດການເກັບຮັກສາ ແລະການນຳໃຊ້ຢາວັກຊີນ ຕາມຄຳແນະນຳຂອງສະລາກຢາວັກຊີນ, ແຕ່ລະຊະນິດ ເພື່ອໃຫ້ວັກຊີນມີປະສິດທິພາບດີທີ່ສຸດ ແລະເກັບຮັກສາໄດ້ດົນ
3. ຄວນນຳໃຊ້ຢາວັກຊີນຕາມຄຳແນະນຳຂອງສັດຕະວະແພດເທົ່ານັ້ນ, ໂດຍສະເພາະຢ່າງຍິ່ງ ໃນບໍລິເວນທີ່ມີພະຍາດສັດກຳລັງລະບາດ.
4. ຕ້ອງໃຊ້ຢາວັກຊີນໃຫ້ໝົດກ່ອນວັນໝົດອາຍຸທີ່ແຈ້ງໃນແກ້ວຢາ, ຢ່າໃຫ້ຢາແກ່ສັດທີ່ກຳລັງຈະຂ້ານຳໄປເປັນອາຫານ ຢາວັກຊີນທີ່ປະສົມນ້ຳກັນແລ້ວຄວນນຳໃຊ້ໃຫ້ໝົດພາຍໃນ 2 ຊົ່ວໂມງ, ລະຫວ່າງທີ່ນຳໃຊ້ຄວນຈະເກັບໄວ້ໃນກະຕິກນ້ຳກ້ອນ. ໂດຍສະເພາະຢ່າງຍິ່ງ ໃນບໍລິເວນທີ່ມີພະຍາດສັດກຳລັງລະບາດ.

## • ການທຳລາຍສິ່ງເສດເຫຼືອຈາກການນ້ຳໃຊ້ວັກຊີນ

⇒ ຢາວັກຊີນທີ່ເຫຼືອຈາກການນ້ຳໃຊ້ ຕ້ອງຝັງແລະທຳລາຍຖິ້ມເພື່ອ ຫຼີກລ້ຽງການປົນເປື້ອນ ແລະຈະພາໃຫ້ເກີດເປັນອັນຕະລາຍໃນຄັ້ງຕໍ່ໄປ.

⇒ ສ່ວນແກ້ວທີ່ບັນຈຸຢາວັກຊີນນັ້ນຄວນຕົ້ມ, ເຜົາ ຫຼືຝັງ

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ

# ຂໍ້ແນະນຳ

# ການປ້ອງກັນພະຍາດນິວຄາເຊີນໄກ່



ຈັດຕັ້ງປະຕິບັດໂດຍ: **CETDU**
(ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)
ຮ່ວມກັບ:
ໂຄງການ ສົ່ງເສີມ ກະສິກຳ **(LEAP)**